# ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

628 ໜ່ວຍ 19 ບ້ານ ໂພນພະເນົາ ກມ. 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6


**ໜັງສືເຊີນປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020**

ເລກທີ 2011007/ /ມທຫຊ

ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2020

**ຮຽນ:** ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

**ເລື່ອງ:** ຂໍເຊີນເຂົ້າຮ່ວມກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020

ຕາມມະຕິປະຊຸມສະພາບໍລິຫານ ວັນທີ 16 ຕຸລາ 2020 ທີ່ກຳນົດໃຫ້ບໍລິສັດຮຽກປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020 ເພື່ອພິຈາລະນາວາລະທີ່ຈຳເປັນ ບໍລິສັດຈຶ່ງຂໍເຊີນທ່ານໃນຖານະຜູ້ຖືຮຸ້ນຂອງບໍລິສັດຈາກການປິດທະບຽນຜູ້ຖືຮຸ້ນເມື່ອ **ວັນທີ 3 ພະຈິກ 2020** ເຂົ້າຮ່ວມປະຊຸມໂດຍມີລາຍລະອຽດດັ່ງຕໍ່ໄປນີ້:

| | | |
|---|---|---|
| ລັກສະນະການປະຊຸມ | : | ປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020 |
| ວັນທີປະຊຸມ | : | ວັນທີ 4 ທັນວາ 2020 |
| ເວລາ | : | 10:00 ໂມງ ເປັນຕົ້ນໄປ |
| ສະຖານທີ່ປະຊຸມ | : | ທີ່ **ຄອນເວັນຊັນ ເຊັນເຕີ້, ຊັ້ນ4, ຫ້ອງ ໄຂ່ມຸກ ( Pearl room )** **ໂຮງແຮມແລນມາກ ແມ່ຂອງ ລີເວີໄຊທ໌**, ບ້ານ ທາດຂາວ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ |

**ວາລະການປະຊຸມ ດັ່ງລຸ່ມນີ້:**

**ວາລະທີ 1** **ພິຈາລະນາຮັບຮອງລາຍງານກອງປະຊຸມຄັ້ງທີ່ຜ່ານມາ**

**ວາລະທີ 2** **ພິຈາລະນາອະນຸມັດ ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປັບປຸງສັດສ່ວນຮຸ້ນ floating ໃນຕະຫຼາດຫຼັກຊັບລາວ**

**ວາລະທີ 3** **ພິຈາລະນາອະນຸມັດປັບປຸງແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (Par Value)**

**ວາລະທີ 4** **ພິຈາລະນາອະນຸມັດແກ້ໄຂກົດລະບຽບຂອງບໍລິສັດ**

**ວາລະທີ 5** **ເລື່ອງອື່ນໆ ( ຖ້າມີ )**

ຈຶ່ງຮຽນມາເພື່ອເຂົ້າຮ່ວມປະຊຸມໃນວັນ ແລະ ເວລາດັ່ງກ່າວ ຫາກບໍ່ສາມາດເຂົ້າປະຊຸມໄດ້ດ້ວຍຕົວເອງ ສາມາດມອບສິດໃຫ້ຜູ້ອື່ນເຂົ້າຮ່ວມປະຊຸມ ໂດຍຈັດເຮັດໜັງສືມອບສິດ ແລະ ແຈ້ງໃຫ້ບໍລິສັດຊາບກ່ອນລ່ວງໜ້າກ່ອນການປະຊຸມ

ຂໍສະແດງຄວາມນັບຖື

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

**ທ່ານນາງ ອິນທະວີໄລ ອຸດົມ**

**ຮອງປະທານສະພາບໍລິຫານ**

MAHATHUEN LEASING PUBLIC COMPANY
628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR
TEL 021 418062 - 418066

## ເອກະສານຄັດຕິດ ກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020

1. ວາລະກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020
2. ໃບມອບສິດ
3. ຄຳແນະນຳກ່ຽວກັບການລົງຄະແນນສຽງ
4. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
5. ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ
6. ແຜນທີ່ຂອງສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ

**ໝາຍເຫດ**

1. ຜູ້ຖືຮຸ້ນທຸກທ່ານຕ້ອງໄດ້ນຳເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 12 ພະຈິກ 2020 ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: (856-20) 454361-4, ແຟັກ: (856-21) 454361-4
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ກໍລະນີເປັນຄົນຕ່າງປະເທດ) ມາສະເໜີຕົວເພື່ອເຂົ້າຮ່ວມກອງປະຊຸມ
3. ຖ້າຫາກທ່ານບໍ່ສະດວກທີ່ໄປຮ່ວມກອງປະຊຸມດ້ວຍຕົນເອງ ຈະມອບສິດໃຫ້ບຸກຄົນອື່ນໄປເຂົ້າຮ່ວມແທນກໍ່ໄດ້ ໂດຍມອບສິດໃຫ້ຕາມແບບທີ່ຄັດຕິດມາພ້ອມໜັງສືສະບັບນີ້ ແລະ ນຳມາມອບໃຫ້ປະທານກອງປະຊຸມ ຫຼື ຜູ້ທີ່ປະທານກອງປະຊຸມມອບໝາຍ ຊຶ່ງຜູ້ໄດ້ຮັບມອບສິດຕ້ອງໄດ້ນຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ກໍລະນີເປັນຄົນຕ່າງປະເທດ) ມາສະເໜີຕົວເພື່ອເຂົ້າຮ່ວມກອງປະຊຸມ
4. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ສະມາຊິກສະພາບໍລິຫານອິດສະຫຼະຂອງບໍລິສັດ ເຂົ້າຮ່ວມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດດັ່ງກ່າວ ແລະ ໝາຍ (✔) ເພື່ອເລືອກເອົາສະພາບໍລິຫານອິດສະຫຼະຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານຄັດຕິດນັ້ນສົ່ງເຖິງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ, ຖະໜົນ ໄກສອນພົມວິຫານ, ບ້ານ ໂພນພະເນົາ ກມ5, ເມືອງ ໄຊເສດຖາ,ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6 ແລະ ກະລຸນາສົ່ງເຖິງບໍລິສັດກ່ອນ ວັນທີ 27 ພະຈິກ 2020
5. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສິດ ລວມທັງລາຍລະອຽດໃນໜັງຊືເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມ ທ່ານ ນາງ ກູ່ ທຳມະວົງ , ໂທ: (856-20) 58049885

**ວາລະທີ 1** **ພິຈາລະນາຮັບຮອງລາຍງານກອງປະຊຸມສາມັນຜູ້ຖືປະຈຳປີໃນຄັ້ງທີ່ຜ່ານມາ**

<u>ວັດຖຸປະສົງ ແລະ ເຫດຜົນ:</u>

ລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີຄັ້ງທີ່ຜ່ານມາ ເມື່ອວັນທີ 29 ພຶດສະພາ 2020 ເພື່ອໃຫ້ຜູ້ຖືຮຸ້ນພິຈາລະນາຮັບຮອງລາຍງານການປະຊຸມດັ່ງກ່າວ ຕາມເອກະສານຄັດຕິດ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນວ່າກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄວນຮັບຮອງເອົາລາຍງານການປະຊຸມຜູ້ຖືຮຸ້ນປະຈຳປີທີ່ຜ່ານມາ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິທົ່ວໄປ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 2 ພິຈາລະນາອະນຸມັດ ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ floating ໃນຕະຫຼາດຫຼັກຊັບລາວ**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ຜູ້ຖືຮຸ້ນທີ່ເປັນຜູ້ສ້າງຕັ້ງ ມີຄວາມຕ້ອງການນຳຮຸ້ນໄປຝາກໃນຕະຫຼາດຫຼັກຊັບລາວ ເພື່ອໃຫ້ສາມາດຊື້ຂາຍຮຸ້ນ ແລະ ການຮັບເງິນປັນຜົນ ຜ່ານຕະຫຼາດຫຼັກຊັບລາວໄດ້

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນຄວນແກ້ໄຂສັດສ່ວນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ floating ໃນຕະຫຼາດຫຼັກຊັບລາວ ໃນສັດສ່ວນຫຼາຍສຸດຕາມທີ່ກົດໝາຍ ຫຼື ເກນທີ່ຕະຫຼາດຫຼັກຊັບລາວ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວອະນຸຍາດ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິສະເພາະ ຄືຕ້ອງໄດ້ຮັບຄວາມເຫັນດີ ດ້ວຍຄະແນນສຽງ ສອງສ່ວນສາມ ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງໜ້ອຍ ແປດສິບສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ

**ວາລະທີ 3 ພິຈາລະນາອະນຸມັດປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (Par Value)**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ເພື່ອເປັນການເພີ່ມໂອກາດຂອງຜູ້ລົງທຶນລາຍຍ່ອຍໃຫ້ສາມາດເຂົ້າມາລົງທຶນໃນຮຸ້ນຂອງບໍລິສັດໄດ້ງ່າຍຂຶ້ນ ແລະ ເປັນການສ້າງໂອກາດໃນການເພີ່ມສະພາບຄ່ອງໃນການຊື້ຂາຍຮຸ້ນຂອງບໍລິສັດ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນຄວນປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (Par Value) ຈາກຮຸ້ນລະ 1.000 ກີບ ເປັນ 100 ກີບ ເຊິ່ງຈະເຮັດໃຫ້ຈຳນວນຮຸ້ນທັງໝົດເພີ່ມຈາກ 40.000,000 ຮຸ້ນ ເປັນ 400.000,000 ຮຸ້ນ ໂດຍມີຈຳນວນທຶນຈົດທະບຽນ 40.000,000,000 ກີບເທົ່າເດີມ

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິສະເພາະ ຄືຕ້ອງໄດ້ຮັບຄວາມເຫັນດີ ດ້ວຍຄະແນນສຽງ ສອງສ່ວນສາມ ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງໜ້ອຍ ແປດສິບສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ

**ວາລະທີ 4 ພິຈາລະນາອະນຸມັດແກ້ໄຂກົດລະບຽບຂອງບໍລິສັດ**

**<u>ວັດຖຸປະສົງ ແລະ ເຫດຜົນ:</u>**

ການປ່ຽນແປງສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ການປັບປ່ຽນມູນຄ່າກຳນົດ (Par Value) ຕ້ອງແກ້ໄຂໃນລະບຽບຂອງບໍລິສັດ

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ເຫັນຄວນແກ້ໄຂກົດລະບຽບຂອງບໍລິສັດ ເພື່ອປ່ຽນແປງສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ການປັບປ່ຽນມູນຄ່າກຳນົດ (Par Value) ທີ່ກົງກັບມະຕິກອງປະຊຸມໄດ້ອະນຸມັດໄວ້ຕາມ ວາລະທີ 2 ແລະ ວາລະທີ 3

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິສະເພາະດ້ວຍຄະແນນສຽງ ສອງສ່ວນສາມ ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງໜ້ອຍ ແປດສິບສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ

**ວາລະທີ 5 ພິຈາລະນາເລື່ອງອື່ນໆ (ຖ້າມີຜູ້ສະເໜີເພີ່ມເຕີມ)**

ວາລະກອງປະຊຸມ ແລະ ຄຳເຫັນຂອງສະພາບໍລິຫານດັ່ງກ່າວຂ້າງຕົ້ນນັ້ນ ສະມາຊິກສະພາບໍລິຫານອິດສະຫຼະບໍ່ມີຄຳເຫັນເປັນຢ່າງອື່ນສຳລັບກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020 ທາງບໍລິສັດຈະເຊີນສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ , ຕະຫຼາດຫຼັກຊັບລາວ, ຜູ້ກວດສອບບັນຊີພາຍນອກ ແລະ ແຕ່ງຕັ້ງຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ ແລະ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເພື່ອເປັນສັກຂີປະຍານ ແລະ ຊ່ວຍດູແລກວດສອບໃຫ້ກອງປະຊຸມເປັນໄປຢ່າງຖືກຕ້ອງ, ໂປ່ງໃສຕາມລະບຽບກົດໝາຍທີ່ກ່ຽວຂ້ອງ

MAHATHUEN LEASING PUBLIC COMPANY
628 PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT, VIENTIANE CAPITAL, LAO PDR
TEL 021 418062 - 418066

# ໃບມອບສິດ

# Proxy

1. ຂ້າພະເຈົ້າ/(I/we)........................................................ສັນຊາດ/Nationality..................................
ບັດປະຈຳຕົວເລກທີ່/Passport number:..............................................................................................
ທີ່ຢູ່ປະຈຸບັນ/Current address...........................................................................................................
ເບີໂທລະສັບ/Telephone No.: ...........................................ອີເມວ/email........................................
ເປັນຜູ້ຖືຮຸ້ນບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມທຫຊ)
Being a shareholder of Mahathuen Leasing Public Company (MHTL)
ມີຮຸ້ນທີ່ຖືຈຳນວນ........................................................ຮຸ້ນ ຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ
Holding a total number of …………………………….. shares which are equivalent to the same number of votes
2. ຂໍມອບໝາຍ ທ່ານ/Hereby assign Mr./Ms. ...................................................ອາຍຸ/age..................
ບັດປະຈຳຕົວເລກທີ່/Passport number:................................................................................................
ທີ່ຢູ່ປະຈຸບັນ/Current address:.............................................................................................................
ເບີໂທລະສັບ/Telephone No.: ..................................ອີເມວ/email................................................
ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020 ຂອງ ມທຊທ ທີ່ຈະຈັດຂຶ້ນໃນເວລາ 10:00 ໂມງ ຂອງວັນທີ 4 ທັນວາ 2020
To be my/our proxy to attend and vote on my/our behalf in the Extra-Ordinary General Shareholders' meeting no. 1 for year 2020 of the MHTL which will be held at 10:00 am on 4th December 2020

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງ ຈາກສາມທາງເລືອກລຸ່ມນີ້):
I/We authorize the proxy to vote on my/our behalf in the Meeting as follows (choose one from the three following options):

**ທາງເລືອກ 1. ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື**

To grant the proxy to consider and vote in all agendas on my/ our behalf as the proxy may deem appropriate; or

☐ ຜູ້ມອບສິດອະນຸມັດ Approve ☐ ຜູ້ມອບສິດບໍ່ອະນຸມັດ disapprove

**ທາງເລືອກ 2. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ.**

To grant the proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects; or

ວາລະທີ 1 ພິຈາລະນາຮັບຮອງລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ

Agenda 1 Consider Adopt the Annual General Shareholder's Meeting report for the previous year.

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ disapprove ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ Approve the right of the voter to vote appropriately

ວາລະທີ 2 ພິຈາລະນາອະນຸມັດ ແກ້ໄຂສັດສ່ວນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ floating ໃນຕະຫຼາດຫຼັກຊັບລາວ

Agenda 2 Consider approving the amendment of the proportion of the Promotors share and change the proportion of floating shares in the Lao Stock Exchange.

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ disapprove ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ Approve the right of the voter to vote appropriately

ວາລະທີ 3 ພິຈາລະນາອະນຸມັດປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (Par Value)

Agenda 3 Consider approving to split the share value.

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ disapprove ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ Approve the right of the voter to vote appropriately

ວາລະທີ 4 ພິຈາລະນາອະນຸມັດແກ້ໄຂກົດລະບຽບຂອງບໍລິສັດ

Agenda 4 Consider approving the amendment of company bylaws.

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ disapprove ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ Approve the right of the voter to vote appropriately

ວາລະທີ 5 ພິຈາລະນາເລື່ອງອື່ນໆ (ຖ້າມີຜູ້ສະເໜີເພີ່ມເຕີມ)

Agenda 5 Consider Others Maters ( if any )

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ disapprove ☐ ອະນຸມັດໃຫ້ສິດຜູ້ຕາງໜ້າລົງຄະແນນຕາມເຫັນສົມຄວນ Approve the right of the voter to vote appropriately

**ທາງເລືອກ 3. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາລົງຄະແນນ ເຫັນດີ ຫຼື ບໍ່ເຫັນດີ ໃນທຸກໆ ວາລະລຸ່ມນີ້):**

To grant the proxy to vote as per my/ our intention indicated in the followings ( if you select this option, please choose to vote either approve or disapprove in ever agenda):

ວາລະທີ 1 ພິຈາລະນາຮັບຮອງລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ

Agenda 1 Consider Adopt the Annual General Shareholder's Meeting report for the previous year.

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ disapprove

ວາລະທີ 2 ພິຈາລະນາອະນຸມັດ ແກ້ໄຂສັດສ່ວນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ floating ໃນຕະຫຼາດຫຼັກຊັບລາວ
Agenda 2 Consider approving the amendment of the proportion of the Promotors share and change the proportion of floating shares in the Lao Stock Exchange.

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ disapprove

ວາລະທີ 3 ພິຈາລະນາອະນຸມັດປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (Par Value)
Agenda 3 Consider approving to split the share value.

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ disapprove

ວາລະທີ 4 ພິຈາລະນາອະນຸມັດແກ້ໄຂກົດລະບຽບຂອງບໍລິສັດ
Agenda 4 Consider approving the amendment of company bylaws.

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ disapprove

ວາລະທີ 5 ພິຈາລະນາເລື່ອງອື່ນໆ (ຖ້າມີຜູ້ສະເໜີເພີ່ມເຕີມ)

Agenda 5 Consider Others Maters ( if any )

☐ ຜູ້ມອບສິດເຫັນດີ Approve ☐ ຜູ້ມອບສິດບໍ່ເຫັນດີ disapprove

4. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ

   Any votes made by the proxy contradicting to this Proxy shall be considered as invalid and shall not constitute my/our votes as the shareholder.

5. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ ບໍ່ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ

   In case I/We have failed to specify my/our voting intention in any agenda or not clearly specified, my/our vote in such agenda shall be deemed approved.

6. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກປະການ

   Any action made by the proxy in the meeting in accordance with this Proxy, shall be deemed as having been performed by myself/ ourselves in all respects.

**MAHATHUEN LEASING PUBLIC COMPANY**

628 PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT, VIENTIANE CAPITAL, LAO PDR

TEL 021 418062 - 418066

ທີ່/ Wrote at.......................................................ວັນທີ່/date.........................................

ເຊັນຜູ້ຖືຮຸ້ນທີ່ມອບໝາຍ / Signed by the shareholder

_______________________________

ເຊັນຜູ້ຕາງໜ້າ / Signed by the proxy

_______________________________

**ໝາຍເຫດ**/ Remark

1. ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ
   The shareholder is required to assign only one proxy to attend and vote in the meeting on the shareholder’s behalf.

2. ໃບມອບສິດສະບັບນີ້ຈະຕ້ອງນໍາໄປຈົດທະບຽນສານ ນໍາສໍານັກງານທະບຽນສານທີ່ຢູ່ສະດວກສໍາລັບທານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ, ມຫຊທ ມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ
   This Proxy must be certified by your most convenient Court Notary Office to ensure its legal validity. MHTL may reject any Proxies or proxy authorizations without endorsement of the Court Notary Office.

3. ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈໍາໂຕະລົງທະບຽນ ຄື: ບັດປະຈໍາຕົວ ຫຼື ປື້ມສໍາມະໂນຄົວ ຫຼື ໜັງສືຜ່ານແດນ ( ສໍາລັບນັກລົງທຶນຕ່າງປະເທດ ) ພ້ອມກັບສໍາເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ
   The proxy must present to the officers at registration desk his/her valid ID Card, or Family book or Passport (in case of foreign investor) together with the copies of the same documents of the shareholder, this Proxy, and the invitation to the Meeting.

**MAHATHUEN LEASING PUBLIC COMPANY**

628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR

TEL 021 418062 - 418066

## ປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ມີສະມາຊິກສະພາບໍລິຫານ (ອິດສະຫຼະ) ຈຳນວນ 3 ທ່ານ ຈາກຈຳນວນສະມາຊິກສະພາບໍລິຫານ 9 ທ່ານ ຊຶ່ງມີລາຍຊື່ດັ່ງນີ້

| | |
|---|---|
| 1. ທ່ານ ນັນທະພັດ ງາມປລັ່ງ | ສະມາຊິກສະພາບໍລິຫານ (ອິດສະຫຼະ), ຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ ແລະ ຄະນະກຳມະການຄັດເລືອກ |
| 2. ທ່ານ ທີລະເມດ ວຸດທິພັດພິບູນ | ສະມາຊິກສະພາບໍລິຫານ (ອິດສະຫຼະ), ປະທານຄະນະກຳມະການກວດສອບລາຍການທີ່ກ່ຽວພັນ, ຄະນະກຳມະການກວດສອບ ແລະ ຄະນະກຳມະການກຳນົດຄ່າຕອບແທນ |
| 3. ທ່ານ ວິນຍູ ຈີລະປະພາການ | ສະມາຊິກສະພາບໍລິຫານ (ອິດສະຫຼະ), ຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ |

## CV of Independent directors in order to give the right to Shareholder

Mahathuen Leasing Public company, there are 3 independent directors form Board of Directors for 9 persons, which the details are as follow:

| | |
|---|---|
| 1. Mr. Nantapat Ngamplung | Member of Board of Directors (independent), Audit Committee, Risk Management Committee and Nominating Committee. |
| 2. Mr. Theeramate Vuttipadhpibul | Member of Board of Directors ( independent) , Chairman of Related Party Transaction Committee and Remuneration Committee |
| 3. Mr. Winyou jeeraprapakan | Member of Board of Directors (independent), Audit Committee, Risk Management Committee |

**MAHATHUEN LEASING PUBLIC COMPANY**

628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR

TEL 021 418062 - 418066

# ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານອິດສະຫຼະ

## CV of Independent directors



**ຊື່ ແລະ ນາມສະກຸນ :** ທ່ານ ບັນທະພັດ ງາມປລັ່ງ ອາຍຸ: 37 ປີ

**Name and surname:** Mr.Nantapat Ngamplung Age: 37 years old

**ວັນ,ເດືອນ,ປີເກີດ/Date of birth:** 21 July 1981

**ສັນຊາດ/Nationality :** ໄທ/Thai

**ພາສາ/Language :** ໄທ, ອັງກິດ/ Thai, English

**ຕໍາແໜ່ງ:** ສະມາຊິກສະພາບໍລິຫານ(ອິດສະຫຼະ) ຄະນະກໍາມະການກວດສອບ, ຄະນະກໍາມະການຄຸ້ມຄອງຄວາມສ່ຽງ ແລະ ຄະນະກໍາມະການຄັດເລືອ

**Position:** Member of Board of Directors (Independent) Audit Committee, Risk Management Committee and Nominating Committee.

**ວັນທີແຕ່ງຕັ້ງ/Date of Appointed:** 10 August 2017

**ປະຫວັດການສຶກສາ/Education:**

- ປີ 2003 : ປະລິຍາຕຣີ ບັນຊີ, ມະຫາວິທະຍາໄລກະເສດສາດ, ປະເທດໄທ
  Bachelor's Degree of Accounting, Kasetsart University, Thailand

**ປະຫວັດການເຮັດວຽກ/Exprerince::**

- ປີ 2003 – 2004 : Internal audit, Italian-Thai Development Plc.
- ປີ 2004 – 2011 : Auditor, Assistant manager, BDO limited
- ປີ 2012 - ປະຈຸບັນ : Auditor manager, Professional auditing Service Co.,Ltd

**ການເຂົ້າຮ່ວມປະຊຸມໃນປີ 2020 (ສິ້ນສຸດເຖິງວັນທີ 30 ເດືອນ ຕຸລາ 2020)**

- ສະພາບໍລິຫານ/Board of Directors 4/4 ຄັ້ງ
- ຄະນະກໍາມະການກວດສອບ/Audit Committee 4/4 ຄັ້ງ
- ຄະນະກໍາມະການຄຸ້ມຄອງຄວາມສ່ຽງ/Risk Management Committee 1/1 ຄັ້ງ
- ຄະນະກໍາມະການຄັດເລືອກ/Nomination Committee 1/1 ຄັ້ງ

**MAHATHUEN LEASING PUBLIC COMPANY**

628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR

TEL 021 418062 - 418066

# ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານອິດສະຫຼະ

## CV of Independent directors



**ຊື່ ແລະ ນາມສະກຸນ** : ທ່ານ ທີລະເມດ ວຸດທິພັດພິບູນ ອາຍຸ: 51 ປີ

Name and surname: Mr. Theeramate Vuttipadhpibul Age: 51 years old

**ວັນ,ເດືອນ,ປີເກີດ/Date of birth:** 20 September 1967

**ສັນຊາດ/Nationality** : ໄທ/Thai

**ພາສາ/Language** : ໄທ, ອັງກິດ/ Thai, English

**ຕຳແໜ່ງ:** ສະມາຊິກສະພາບໍລິຫານ(ອິດສະຫຼະ) ປະທານຄະນະກຳມະການກວດສອບລາຍການທີ່ກ່ຽວພັນ, ຄະນະກຳມະການກວດສອບ ແລະ ຄະນະກຳມະການກຳນົດຄ່າຕອບແທນ

**Position:** Member of Board of Directors (Independent) Chairman of Related Party Transaction Committee and Remuneration Committee

**ວັນທີແຕ່ງຕັ້ງ/Date of Appointed:** 10 August 2017

**ປະຫວັດການສຶກສາ/Education:**

- ປີ 1989 : ປະລິນຍາຕີ ບັນຊີ, ມະຫາວິທະຍາໄລຈຸລາລົງກອນ
  Bachelor's degree of Accounting, Chulalongkorn University
- ປີ 1997 : ປະລິນຍາໂທ ການບໍລິຫານທຸລະກິດ, ມະຫາວິທະຍາໄລທຳມະສາດ
  Master's degree of business administration, Thammasat University

**ປະຫວັດການເຮັດວຽກ / Exprerince:**

- ປີ 1989 – 1992 : Senior Auditor, SCG-Na Co.,LTD (Anthur Anderson Group)
- ປີ 1992 – 1994 : Chief Accountant, Siam Syntech Construction PCL
- ປີ 1994 – 1997 : Manager, UTV Cable Network PCL ( Television )
- ປີ 1997 – 1998 : Senior Manager, Cinplex Co.,Ltd
- ປີ 1998 – 2003 : Financial Controller and Office Manager, Asia Pacific Potash Co.,Ltd
- ປີ 2003 – 2007 : Manager, Boots Retail Thailand Co.,Ltd
- ປີ 2007 – 2012 : Senior Manager and Company secretary, California WOW Xperience PCL(CAWOW)
- ປີ 2013 – 2014 : Senior Manager. WE Fitness Co.,Ltd ( related company of major group PCL )
- ປີ 2014 – 2015 : Head of Accounting and Finance. Ticon Management Company Limited
- ປີ 2015 – 2015 : CFO, KIRZ Company Limited
- ປີ 2015 - ປະຈຸບັນ: Executive Vice President Business, Advance Information Technology PCL
  ( Former Subsidiary of AITPCL )

**ການເຂົ້າຮ່ວມປະຊຸມໃນປີ 2020 (ສິ້ນສຸດ ເຖິງວັນທີ 30 ເດືອນ ຕຸລາ 2020)**

- ສະພາບໍລິຫານ/Board of Directors 4/4 ຄັ້ງ
- ຄະນະກຳມະການກວດສອບ/Audit Committee 4/4 ຄັ້ງ
- ຄະນະກຳມະການກຳນົດຄ່າຕອບແທນ/Remuneration Committee 3/3 ຄັ້ງ
- ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ/Related Party Transaction Committee 1/1 ຄັ້ງ

**MAHATHUEN LEASING PUBLIC COMPANY**

628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR

TEL 021 418062 - 418066

# ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານອິດສະຫຼະ

# CV of Independent directors



**ຊື່ ແລະ ນາມສະກຸນ :** ທ່ານ ວິນຍູ ຈິລະປະພາການ ອາຍຸ: 43 ປີ

**Name and surname:** Mr. Winyou Jeeraprapakan Age: 43 years old

**ວັນ,ເດືອນ,ປີເກີດ/Date of birth:** 12 Jan 1977

**ສັນຊາດ/Nationality :** ໄທ/Thai

**ພາສາ/Language :** ລາວ, ອັງກິດ, ຣັດເຊຍ/ Lao, English, Russian

**ຕຳແໜ່ງ :** ສະມາຊິກສະພາບໍລິຫານ (ອິດສະຫຼະ), ຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ

**Position :** Member of Board of Directors (Independent), Audit Committee, Risk Management Committee

**ວັນທີແຕ່ງຕັ້ງ/Date of Appointed:** 29 May 2020

**ປະຫວັດການສຶກສາ/Education:**

- Master degree – Economics (NIDA)
- Bachelor degree – Science (Khonkaen University)

**ປະຫວັດການເຮັດວຽກ/Exprerince:**

- **2018 – Present –** Vice President, Tanakit Infinity Plus Co., Ltd. Asset and Debt management company
- **2003 – Present –** Managing Director, Ubonvibool Part., Ltd. The Authorized Distribution of Maxxis International Co., Ltd.
- **2001 – Present –** Managing Director, Car Clinic Part., Ltd.

**ການເຂົ້າຮ່ວມປະຊຸມໃນປີ 2020 (ສິ້ນສຸດ ເຖິງວັນທີ 30 ເດືອນ ຕຸລາ 2020)**

- ສະພາບໍລິຫານ/Board of Directors 2/4 ຄັ້ງ
- ຄະນະກຳມະການກວດສອບ/Audit Committee 2/4 ຄັ້ງ
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ/Risk Management Committee 1/1 ຄັ້ງ

**MAHATHUEN LEASING PUBLIC COMPANY**

628, PHONPHANAO VILLAGE, KM5, KAISONEPHOMVIHANH ROAD, XAYSETTHA DISTRICT VIENTIANE CAPITAL, LAO PDR

TEL 021 418062 - 418066

# ເອກະສານປະກອບວາລະທີ1: ລາຍງານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019

**ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ**

628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

# ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019
# ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (“ບໍລິສັດ”)

**ວັນ, ເວລາ ແລະ ສະຖານທີ່ :**

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 29 ພຶດສະພາ 2020 ເວລາ 10:00 ໂມງ ທີ່ ຫ້ອງໄຂ່ມຸກ ( Pearl room ) ຊັ້ນ4, ຄອນເວັນຊັນ ເຊັນເຕີ້, ໂຮງແຮມ ແລນມາກ ແມ່ຂອງ ລິເວີໄຊທ໌, ບ້ານ ທາດຂາວ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ

**ກ່ອນທີ່ຈະເປີດກອງປະຊຸມ:**

ທ່ານ ຊາຄຣິດ ນັກສອນ ປະທານສະພາບໍລິຫານຂອງບໍລິສັດ ໄດ້ແຈ້ງໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ໂດຍຜ່ານວີດີໂອຄອນເຟີເລັນ, ເນື່ອງຈາກມີການແຜ່ລະບາດຂອງພະຍາດໄວຣັດ ໂຄວິດ-19 ນັບຕັ້ງແຕ່ຕົ້ນປີທີ່ຜ່ານມາ, ລັດຖະບານລາວໄດ້ອອກຄຳສັ່ງມາດຕະການເພື່ອປ້ອງກັນ, ສະກັດກັ້ນ ແລະ ຄວບຄຸມພະຍາດໄວຣັດ ໂຄວິດ-19 ເຊິ່ງມີມາດຕະການໜຶ່ງແມ່ນບໍ່ອະນຸຍາດໃຫ້ເດີນທາງເຂົ້າ-ອອກປະເທດໄດ້, ປະຈຸບັນສະມາຊິກສະພາບໍລິຫານຂອງບໍລິສັດຫຼາຍທ່ານທີ່ຢູ່ຕ່າງປະເທດ ບໍ່ສາມາດເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໄດ້ ແຕ່ຈະເຂົ້າຮ່ວມກອງປະຊຸມໂດຍຜ່ານວີດີໂອຄອນເຟີເລັນ ແລະ ສະມາຊິກສະພາບໍລິຫານຜູ້ທີ່ຖືຮຸ້ນຂອງບໍລິສັດໄດ້ກຽມ ແລະ ສົ່ງໃບມອບສິດ ເພື່ອລົງຄະແນນສຽງໃນແຕ່ລະວາລະຂອງກອງປະຊຸມໄວ້ລ່ວງໜ້າແລ້ວ

ໃນຂະນະດຽວກັນປະທານສະພາບໍລິຫານກໍໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ ໂດຍຜ່ານວີດີໂອຄອນເຟີເລັນ, ເຊິ່ງມັນຈະບໍ່ສະດວກໃນການດຳເນີນກອງປະຊຸມ. ສະນັ້ນ, ທ່ານຈຶ່ງໄດ້ແຕ່ງຕັ້ງໃຫ້ ທ່ານ ສັງຄົມ ຈັນສຸກ ສະມາຊິກສະພາບໍລິຫານອິດສະຫຼະຂອງບໍລິສັດໃຫ້ເປັນປະທານໃນກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ແທນ

ທ່ານ ສັງຄົມ ຈັນສຸກ ສະມາຊິກສະພາບໍລິຫານຂອງບໍລິສັດ ເປັນປະທານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019, ປະທານກອງປະຊຸມໄດ້ກ່າວຕ້ອນຮັບບັນດາທ່ານຜູ້ຖືຮຸ້ນ ແລະ ຜູ້ເຂົ້າຮ່ວມທັງໝົດພ້ອມທັງແຈ້ງໃຫ້ຊາບວ່າ ມີຜູ້ເຂົ້າຮ່ວມປະຊຸມທັງໝົດ 31 ທ່ານ, ເຂົ້າຮ່ວມປະຊຸມດ້ວຍຕົນເອງ 10 ທ່ານ ແລະ ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ 21 ທ່ານ ຖືຮຸ້ນລວມ 30.235.276 ຮຸ້ນ ຫຼື ເທົ່າກັບ 75,59% ຂອງຈຳນວນຮຸ້ນທັງໝົດ ຖືວ່າຄົບອົງປະຊຸມຕາມລະບຽບກົດໝາຍ ແລະ ລະບຽບຂອງບໍລິສັດ, ປະທານໄດ້ເປີດກອງປະຊຸມຢ່າງເປັນທາງການໃນເວລາ 10:00 ໂມງ ແລະ ມອບໝາຍໃຫ້ພິທີກອນແນະນຳສະມາຊິກສະພາບໍລິຫານລວມທັງເຈົ້າໜ້າທີ່ ທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມດັ່ງຕໍ່ໄປນີ້:

ຜູ້ເຂົ້າຮ່ວມ:

- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມກອງປະຊຸມ:**
  1. ທ່ານ ສັງຄົມ ຈັນສຸກ ສະມາຊິກສະພາບໍລິຫານອິດສະຫຼະ
  2. ທ່ານ ມານົບ ຕຣີລິດວິໄລ ສະມາຊິກສະພາບໍລິຫານ ແລະ ຜູ້ອໍານວຍການໃຫຍ່
- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມປະຊຸມຜ່ານ ວີດີໂອ ຄອນເຟີເລັນ:**
  1. ທ່ານ ຊາຄຣິດ ນັກສອນ ປະທານສະພາບໍລິຫານ
  2. ທ່ານນາງ ອິນທະວິໄລ ອຸດົມ ຮອງປະທານສະພາບໍລິຫານ
  3. ທ່ານນາງ ປຣາດຖະໜາ ນັກສອນ ສະມາຊິກສະພາບໍລິຫານ
  4. ທ່ານນາງ ສຸທິດາ ນັກສອນ ສະມາຊິກສະພາບໍລິຫານ
  5. ທ່ານ ກຽງໄກ ນິດສະຍັນ ສະມາຊິກສະພາບໍລິຫາຍ
  6. ທ່ານ ນັນທະພັດ ງາມປລັ່ງ ສະມາຊິກສະພາບໍລິຫານອິດສະຫຼະ
  7. ທ່ານ ທີຣະເນດ ວຸດທິພັດພິບູນ ສະມາຊິກສະພາບໍລິຫານອິດສະຫຼະ
- **ຜູ້ບໍລິຫານທີ່ເຂົ້າຮ່ວມກອງປະຊຸມ:**
  1. ທ່ານ ທອງຖະຫວັນ ທອງແຖມ ຮັກສາການຮອງຜູ້ອໍານວຍການດ້ານການເງິນ
  2. ທ່ານ ຊັດພົນໄຊ ປັນຍາທໍາບະດີ ຮອງຜູ້ອໍານວຍການດ້ານດໍາເນີນການ
  3. ທ່ານນງ ສຸລິພອນ ສຸວັນໄຊລົບ ຜູ້ຈັດການພະແນກບັນຊີ
- **ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ:**
  1. ທ່ານ ຈິດຕະກອນ ມົວລີຢີ້ງ ຜູ້ຕາງໜ້າຈາກ ບໍລິສັດ ດີລອຍທ໌( ລາວ )ຈໍາກັດຜູ້ດຽວ
  2. ທ່ານ ພຸດທະວີ ທໍາມະວົງສາ ຜູ້ຕາງໜ້າຈາກ ບໍລິສັດ ດີລອຍທ໌( ລາວ )ຈໍາກັດຜູ້ດຽວ
  3. ທ່ານນາງ ສຸລິພອນ ສຸວັນໄຊລົບ ໃນນາມຄະນະກໍາມະການກວດກາການດໍາເນີນກອງປະຊຸມ ແລະ ລົງຄະແນນສຽງ
  4. ທ່ານນາງ ເດືອນເພັນ ສີປະມວນ ໃນນາມຄະນະກໍາມະການກວດກາການດໍາເນີນກອງປະຊຸມ ແລະ ລົງຄະແນນສຽງ
  5. ທ່ານນາງ ຕຸກຕິ່ນ ສີວັນທອງ ຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະກໍາມະການກວດກາການດໍາເນີນກອງປະຊຸມ ແລະ ລົງຄະແນນສຽງ
  6. ທ່ານ ວົງປະສິດ ແສງວົງເດືອນ ຜູ້ຕາງໜ້າຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນນາມຄະນະຕິດຕາມ ແລະ ປະເມີນການດໍາເນີນກອງປະຊຸມ

| | | | |
|---|---|---|---|
| 7. | ທ່ານນາງ ເພັດອານົງ | ມູນລະໄມ | ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດໍາເນີນກອງປະຊຸມ |
| 8. | ທ່ານ ຄໍາແພງ | ແກ້ວປັນຍາ | ຜູ້ຕາງໜ້າຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນນາມຄະນະຕິດຕາມ ແລະ ປະເມີນການດໍາເນີນກອງປະຊຸມ |
| 9. | ທ່ານນາງ ອານຸວັນ | ທໍາມະວົງ | ຜູ້ຕາງໜ້າຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະປະເມີນການດໍາເນີນກອງປະຊຸມ |
| 10. | ທ່ານນາງ ພູວັນ | ຈັນທະລັງສີ | ຜູ້ຖືຮຸ້ນລາຍຍ່ອຍຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະຕິດຕາມ ແລະ ປະເມີນການດໍາເນີນກອງປະຊຸມ |

ຫລັງຈາກນັ້ນ, ພິທີກອນໄດ້ລາຍງານແຕ່ລະວາລະຂອງກອງປະຊຸມສໍາລັບມື້ນັ້ນແລະໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມດັ່ງຕໍ່ໄປນີ້:

1. ວາລະ:

1.1 ພິຈາລະນາຮັບຮອງລາຍງານກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີໃນຄັ້ງທີ່ຜ່ານມາ

1.2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດໍາເນີນການຂອງບໍລິສັດ ແລະ ລາຍງານ ປະຈໍາປີ 2019

1.3 ພິຈາລະນາຮັບຮອງງົບສະແດງສະຖານະທາງການເງິນຂອງບໍລິສັດ ( ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກໍາໄລຂາດທຶນສໍາເລັດ ) ປະຈໍາປີ 2019 ສໍາລັບຮອບປີບັນຊີສິ້ນສຸດໃນວັນທີ 31 ທັນວາ 2019.

1.4 ພິຈາລະນາຮັບຮອງການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມເພື່ອໃຊ້ສໍາລັບຂະຫຍາຍກິດຈະການ ຕາມແຜນງານປະຈ□າປີ 2020

1.5 ພິຈາລະນາອະນຸມັດການຈັດສັນກໍາໄລສຸດທິປະຈໍາປີ 2019 ແລະວິທີການແບ່ງປັນເງິນປັນຜົນ

1.6 ພິຈາລະນາອະນຸມັດແຜນການດໍາເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດປະຈ□າປີ 2020

1.7 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານທົດແທນສະມາຊິກທີ່ໝົດວາລະລົງ

1. ທ່ານ ຊາຄຣິດ ນັກສອນ
2. ທ່ານນາງ ອິນທະວິໄລ ອຸດົມ

3. ທ່ານ ມານົບ ຕຣີລິດວິໄລ
4. ທ່ານນາງ ປຣາດຖະໜາ ນັກສອນ
5. ທ່ານນາງ ສຸທິດາ ນັກສອນ
6. ທ່ານ ກຣອງໄກ ນິດສະຍັນ
7. ທ່ານ ນັນທະພັດ ງາມປລັ່ງ
8. ທ່ານ ທີຣະເມດ ວຸດທິພັດພິບູນ
9. ທ່ານ ວິນຍູ ຈີລະປະພາການ

1.8 ພິຈາລະນາອະນຸມັດກໍານົດຜົນຕອບແທນປະຈໍາປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອ□ານວຍການ

1.9 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກໍານົດຄ່າຕອບແທນສໍາລັບການກວດສອບບັນຊີປະຈໍາປີ 2020

1.10 ເລື່ອງອື່ນໆ ( ຖ້າມີ )

2. ວິທີລົງຄະແນນສຽງ

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈໍານວນຮຸ້ນທີ່ທ່ານຖືຢູ່ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ
- ໃນການລົງຄະແນນສຽງໃນແຕ່ລະວາລະ ປະທານຈະສອບຖາມຜູ້ຖືຮຸ້ນວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ແມ່ນໃຫ້ລົງຄະແນນສຽງໃນບັດລົງຄະແນນສຽງໃນວາລະນັ້ນໆ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າຫ້ອງປະຊຸມ ພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນເພື່ອໄປກວດນັບຄະແນນສຽງ ແລະ ສໍາລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ
- ສໍາລັບຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນໍາເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມ

3. ການນັບຄະແນນສຽງ

- ການນັບຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າໃນວາລະ

ທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ

- ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະໃຫ້ກອງປະຊຸມໄດ້ ຮັບຊາບຫຼັງຈາກລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ. ໃນກໍລະນີຜູ້ຖືຮຸ້ນໄດ້ສົ່ງບັດລົງຄະແນນສຽງບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອປະຊຸມຮັບຊາບຜົນການລົງຄະແນນສຽງໃນວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ໄດ້ນຳເອົາຄະແນນສຽງດັ່ງກ່າວ ມານັບຄະແນນສຽງຕື່ມອີກ

ປະທານກອງປະຊຸມສືບຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໂດຍລາຍງານແຕ່ລະວາລະດັ່ງຕໍ່ໄປນີ້:

## ວາລະທີ 1 ຮັບຮອງລາຍງານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຮອງລາຍງານກອງປະຊຸມສາມັນ ຜູ້ຖືຮຸ້ນ ທີ່ປະຊຸມເມື່ອວັນທີ 26 ເມສາ 2019 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈິ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ ເຊິ່ງໄດ້ປະຊຸມໃນວັນທີ 26 ເມສາ 2019

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງຄິດເປັນ 0,0% ຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 30.235.276 ສຽງ ຄິດເປັນ 100,0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

**ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ ເຊິ່ງຈັດຂຶ້ນໃນວັນທີ 26 ເມສາ 2019

## ວາລະທີ 2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2019

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດໍາເນີນການຂອງບໍລິສັດ ແລະ ລາຍງານປະຈໍາປີ 2019 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງທີ່ເຂົ້າຮ່ວມປະຊຸມ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອໍານວຍການໃຫຍ່ ເປັນຜູ້ນໍາສະເໜີບົດສະຫຼຸບລາຍງານກ່ຽວກັບການດໍາເນີນການຂອງບໍລິສັດ ແລະ ລາຍງານປະຈໍາປີ 2019 ເຊິ່ງມີລາຍລະອຽດດັ່ງນີ້:

- ຜົນດໍາເນີນງານທີ່ສໍາຄັນຂອງປີ 2019
  - ເປີດຕົວຜະລິດຕະພັນທາງການເງິນໃໝ່ ເພື່ອສະໜອງເງິນກູ້ສໍາລັບເຄື່ອງໃຊ້ສໍາລັບການກະເສດ

    ໃນຕອນເລີ່ມຕົ້ນຂອງການເປີດຕົວ ບໍລິສັດໄດ້ສູມໃສ່ ຜະລິດຕະພັນລົດໄຖນາປະເພດເດີນຕາມເປັນການທົດລອງ ເມື່ອມີຄວາມພ້ອມຈະຂະຫຍາຍໃຫ້ຄອບຄຸມເຄື່ອງມືທາງການກະເສດໃຫ້ມີຄວາມຫຼາກຫຼາຍຂື້ນ
  - ໄດ້ສ້າງຕັ້ງໜ່ວຍບໍລິການໃໝ່ກໍ່ຄືໜ່ວຍບໍລິການດົງເຫັນ, ມີທີ່ຕັ້ງຢູ່ ແຂວງ ສະຫວັນນະເຂດ

- ຈໍານວນເງິນກູ້ໃໝ່ຂອງ ປີ 2019 ທຽບໃສ່ ປີ 2018

| | 2018 | 2019 | ຜົນຕ່າງ |
|---|---|---|---|
| ຈໍານວນສັນຍາ ( ຄັນ ) | 5.439 | 6.030 | +10.9 % |
| ຈໍານວນເງິນໃຫ້ສິນເຊື່ອ ( ລ້ານກີບ ) | 58.898 | 68.557 | +16.4 % |

- ຜົນການດໍາເນີນທຸລະກິດປະຈໍາ ປີ 2019 ທຽບໃສ່ ປີ 2018.

| | 2018 | 2019 | ຜົນຕ່າງ |
|---|---|---|---|
| ກໍາໄລສຸດທິ ( ກ່ອນອາກອນ ) | 8.791,7 | 10.340,2 | + 1.548,5 |
| ອາກອນນິຕິບຸກຄົນ | 2.198,1 | 2.255,6 | + 57,4 |
| ກໍາໄລສຸດທິ ( ຫຼັງອາກອນ) | 6.593,6 | 8.084,6 | + 1.491,1 |

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາງານປະຈຳປີ 2019

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງຄິດເປັນ 0,0% ຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 30.235.276 ສຽງ ຄິດເປັນ 100,0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

**<u>ມະຕິ:</u>** ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາງານປະຈຳປີ 2019

## ວາລະທີ 3 ພິຈາລະນາງົບສະແດງສະຖານະການເງິນຂອງບໍລິສັດ ປະຈຳປີ 2019 ສຳລັບຮອບປີບັນຊີສິ້ນສຸດໃນວັນທີ 31 ທັນວາ 2019

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາກ່ຽວກັບງົບສະແດງສະຖານະການເງິນຂອງບໍລິສັດ ປະຈຳປີ 2019 ສຳລັບຮອບປີບັນຊີສິ້ນສຸດໃນ ວັນທີ 31 ທັນວາ 2019 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບງົບສະແດງສະຖານະການເງິນຂອງບໍລິສັດ ປະຈຳປີ 2019 ສຳລັບຮອບປີບັນຊີສິ້ນສຸດໃນ ວັນທີ 31 ທັນວາ 2019 ເຊິ່ງມີລາຍລະອຽດດັ່ງນີ້:

- ສະຖານະທາງການເງິນ ວັນທີ 31 ທັນວາ 2019
  - ຊັບສິນລວມ 93.888,9 ລ້ານກີບ
  - ໜີ້ສິນລວມ 26.873,6 ລ້ານກີບ
  - ສ່ວນຂອງຜູ້ຖືຮຸ້ນ 67.015,3 ລ້ານກີບ
  - ລາຍໄດ້ລວມ 24.253,2 ລ້ານກີບ
  - ລາຍຈ່າຍລວມ 13.913,0 ລ້ານກີບ
  - ກຳໄລສຸດທິ 8.084,6 ລ້ານກີບ

- Ratio ທີ່ສຳຄັນ

| | 2018 | 2019 | ປ່ຽນ (+/-) |
|---|---|---|---|
| Net Profit Margin | 32,8% | 33,3% | -0,5% |
| ROA | 9,2% | 8,6% | -0,6% |
| ROE | 10,2% | 12,1% | +1,9% |
| D/E ratio (Times) | 0,1 | 0,4 | +0,3 times |

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາງົບສະແດງສະຖານະການເງິນຂອງບໍລິສັດ ປະຈຳປີ 2019 ສຳລັບຮອບປີບັນຊີສິ້ນສຸດໃນ ວັນທີ 31 ທັນວາ 2019

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງຄິດເປັນ 0,0% ຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 30.235.276 ສຽງ ຄິດເປັນ 100,0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

**<u>ມະຕິ:</u>** ກອງປະຊຸມພິຈາລະນາງົບສະແດງສະຖານະການເງິນຂອງບໍລິສັດ ປະຈຳປີ 2019 ສຳລັບຮອບປີບັນຊີສິ້ນສຸດໃນ ວັນທີ 31 ທັນວາ 2019

**ວາລະທີ 4 ພິຈາລະນາຮັບຮອງການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2020**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2020 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບ ການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2020 ເຊິ່ງມີບົດສະຫຼຸບດັ່ງນີ້:

- ແຜນທຸລະກິດຂອງບໍລິສັດ ສໍາລັບປີ 2020
  - ສິນເຊື່ອໃໝ່ໃນປີ 2020 ແມ່ນເທົ່າກັບ 9.000 ລ້ານກີບ
  - ຍອດເງິນກູ້ທີ່ຄ້າງຈ່າຍໃນທ້າຍປີ 2020 ແມ່ນປະມານ 39.000 ລ້ານກີບ
- ກູ້ຢືມເງິນຈາກທະນາຄານ EXIM ຈາກປະເທດໄທ
  - ເງິນກູ້ທັງໝົດ ເທົ່າກັບ 3.0 ລ້ານໂດລາສະຫະລັດ.
  - ການເຊັນສັນຍາເງິນກູ້ແມ່ນວັນທີ 28 ກຸມພາ 2020.
  - ຈຸດປະສົງເພື່ອຈ່າຍຄືນເງິນກູ້ທີ່ມີຢູ່ຈາກບໍລິສັດ ມະຫະທຸນ ໂຮນດິ້ງ ແລະ ເພື່ອຂະຫຍາຍທຸລະກິດຂອງບໍລິສັດ
- ແນວທາງໃນການກູ້ຢືມ.
  - ກູ້ຢືມຈາກສະຖາບັນການເງິນ ທັງທີ່ມີຫຼັກຊັບຄ້ຳປະກັນ ຫຼື ບໍ່ມີຫຼັກຊັບຄ້ຳປະກັນ
  - ກູ້ຢືມໂດຍການອອກ Corporate Bond ທັງແບບມີຜູ້ຄ້ຳປະກັນ ແລະ ບໍ່ມີຜູ້ຄ້ຳປະກັນ
  - ກູ້ຢືມເງິນຈາກບຸກຄົນ, ກຳມະການ ຫຼື ຜູ້ຖືຮຸ້ນ ທັງທີ່ມີຫຼັກປະກັນ ແລະ ບໍ່ມີຫຼັກປະກັນ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສໍາລັບຂະຫຍາຍກິດຈະການ ຕາມແຜນງານປະຈໍາປີ 2020

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈໍານວນ 0 ສຽງຄິດເປັນ 0,0% ຂອງຈໍານວນສຽງທີ່ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງເຫັນດີ ຈໍານວນ 30.235.276 ສຽງ ຄິດເປັນ 100,0% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

**<u>ມະຕິ:</u>** ກອງປະຊຸມມີມະຕິການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສໍາລັບຂະຫຍາຍກິດຈະການ ຕາມແຜນງານປະຈໍາປີ 2020

**ວາລະທີ 5 ພິຈາລະນາອະນຸມັດການຈັດສັນຫາກໍາໄລສຸດທິ ປະຈໍາປີ 2019 ແລະ ວິທີການແບ່ງເງິນປັນຜົນ**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດການຈັດສັນຫາກໍາໄລສຸດທິ ປະຈໍາປີ 2019 ແລະ ວິທີການແບ່ງເງິນປັນຜົນ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບ ການຈັດສັນຫາກຳໄລສຸດທິ ປະຈຳປີ 2019 ແລະ ວິທີການແບ່ງເງິນປັນຜົນເຊິ່ງມີບົດສະຫຼຸບດັ່ງນີ້:

- ສະຫຼຸບການຈັດສັນຫາກຳໄລສຸດທິປະຈຳປີ 2019 8.084.984.951 ກີບ
  1. ສຳຮອງຕາມກົດໝາຍ 808.498.495 ກີບ 10,00%
  2. ຈ່າຍເງິນປັນຜົນ 4.000.000.000 ກີບ 49,47%
  3. ສະສົມໄວ້ໃນກຳໄລສະສົມ 3.276.486.456 ກີບ 40,53%
- ມື້ປິດປື້ມບັນຊີທະບຽນຜູ້ຖືຄອງຮຸ້ນ ຂອງບໍລິສັດ ເພື່ອກຳນົດຜູ້ມີສິດໄດ້ຮັບເງິນປັນຜົນປະຈຳປີ ໃນວັນທີ 27 ມີນາ 2020
- ກຳນົດຈ່າຍເງິນປັນຜົນໃນອັດຕາ 100 ກີບຕໍ່ຮຸ້ນ ພາຍໃນ 30 ວັນ ຫຼັງອະນຸມັດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ອະນຸມັດການຈັດສັນຫາກຳໄລສຸດທິ ປະຈຳປີ 2019 ແລະ ວິທີການແບ່ງເງິນປັນຜົນ ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງຄິດເປັນ 0,0% ຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 30.235.276 ສຽງ ຄິດເປັນ 100,0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

